**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ນະຄອນຫຼວງວຽງຈັນ
ພະແນກ ໂຍທາທິການ ແລະ ຂົນສົ່ງ

# ບົດບັນທຶກ
## ການສະເໜີຂໍວາງເບ້ຍໄມ້ ເພື່ອຈຳໜ່າຍຢູ່ແຄມທາງເລກ 10
## ຂອງຊາວສວນຜູ້ປະກອບການ ບ້ານ ດ່ານຊ້າງ ເມືອງໄຊທານີ ນະຄອນຫຼວງວຽງຈັນ

- ອີງຕາມ ຄຳຮ້ອງສະເໜີ ຂອງຊາວສວນຜູ້ປະກອບການ ຢູ່ເຂດແຄມທາງເລກ10 ສະບັບລົງວັນທີ 18 ກໍລະກົດ 2024.
- ອີງຕາມ ແຈ້ງການ ຂອງຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 1313/ຫວນວ,ລົງວັນທີ 26 ກໍລະກົດ 2024.

ໃນຕອນເຊົ້າ ຂອງວັນຈັນ, ວັນທີ 12 ກໍລະກົດ 2024, ເວລາ 9:00 ໂມງ ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໄດ້ເປີດກອງປະຊຸມ ປຶກສາຫາລື ກ່ຽວກັບການສະເໜີຂໍວາງເບ້ຍໄມ້ ເພື່ອຈຳໜ່າຍຢູ່ເຂດສະຫງວນທາງເລກ 10 ຂອງຊາວສວນ ຜູ້ປະກອບການ ບ້ານ ດ່ານຊ້າງ ເມືອງໄຊທານີ ນະຄອນຫຼວງວຽງຈັນ.

ພາຍໃຕ້ການເປັນປະທານ ຂອງທ່ານ ທະວີໄຊ ໄຊປະເສີດ ຮອງຫົວໜ້າ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ, ມີຮອງຫົວໜ້າ ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ, ຮອງຫົວໜ້າ ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ, ຮັກສາການຫົວໜ້າຂະແໜງຂົວທາງ, ຕາງໜ້າ ພະແນກ ກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ, ຕາງໜ້າ ຫ້ອງວ່າການປົກຄອງ ເມືອງໄຊທານີ, ຕາງໜ້າຂະແໜງ ເຄຫາ-ຜັງ ເມືອງ ນ້ຳປະປາ ແລະ ສຸຂະພິບານ, ຕາງໜ້າ ຫ້ອງການ ຍທຂ ເມືອງໄຊທານານີ ແລະ ຊາວສວນ (ຜູ້ປະກອບການ) ຈຳນວນ 15 ຫົວໜ່ວຍທຸລະກິດ ເຂົ້າຮ່ວມ. (ລາຍລະອຽດມີລາຍຊື່ຕິດຄັດມາພ້ອມນີ້).

ປະທານກອງປະຊຸມ ໄດ້ສະເໜີຈຸດປະສົງ ແລະ ເປົ້າໝາຍ ຂອງກອງປະຊຸມ,ບັນດາທ່ານ ແຕ່ລະພາກສ່ວນກໍ່ໄດ້ປະກອບຄຳເຫັນ, ຕາງໜ້າ ຊາວສວນ (ຜູ້ປະກອບການຈຳນວນ) 15 ຫົວໜ່ວຍທຸລະກິດ ກໍ່ໄດ້ລາຍງານ ຕໍ່ກອງປະຊຸມຊາບວ່າ: ຖ້າຫາກ ການນຳ ນະຄອນຫຼວງວຽງຈັນ ເຫັນດີໃຫ້ມີການວາງຂາຍເບ້ຍໄມ້ເພື່ອຈຳໜ່າຍຢູ່ເຂດສະຫງວນທາງເລກ 10 ຈະຈັດສັນໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຈົບງາມ, ປະກອບສ່ວນສະໜອງເບ້ຍໄມ້ ຂະໜາດລວງສູງ 2,5 ແມັດ ເພື່ອປູກຕາມແຄມທາງ ພາຍໃນນະຄອນຫຼວງວຽງຈັນ. ໃນນີ້ ສຳລັບຮ້ານຂາຍເບ້ຍໄມ້ທົ່ວໄປ 14 ຮ້ານ ສະໜອງຈຳນວນ 500 ເບ້ຍຕໍ່ຮ້ານ ເທົ່າກັບ 7,000 ເບ້ຍ, ສຳລັບ ນາງ ພິດສະໄໝ ແກ້ວກຸນນະວົງ ຈະປະກອບ ສ່ວນ ຈຳນວນ 2,000 ເບ້ຍ ລວມເປັນຈຳນວນທັງໝົດ 9,000 ເບ້ຍຕໍ່ປີ ພ້ອມທັງບົວລະບັດຕົ້ນໄມ້ ແລະ ສະເໜີຂໍສືບຕໍ່ເຮັດທົດລອງ 3 ປີ. ຜ່ານການປຶກສາຫາລື ກອງປະຊຸມເຫັນດີເປັນເອກະພາບຮ່ວມກັນດັ່ງນີ້:

1. ໃຫ້ຊາວສວນ (ຜູ້ປະກອບການຈຳນວນ) 15 ຫົວໜ່ວຍທຸລະກິດ ຕ້ອງໄດ້ຢຸດເຊົາການວາງຂາຍເບ້ຍໄມ້ຢູ່ແຄມທາງເຂດສະຫງວນ ທາງເລກ 10 ບ້ານ ດ່ານຊ້າງ ເມືອງໄຊທານີ ນະຄອນຫຼວງວຽງຈັນ ຕາມຄະນະກຳມະການອີງການປົກຄອງເມືອງ ໄດ້ລົງເຮັດບົດບັນທຶກໃຫ້ຍົກຍ້າຍອອກ ຄັ້ງວັນທີ 23 ກໍລະ ກົດ 2024.

2. ໃຫ້ ທ່ານ ນາງ ພິດສະໄໝ ແກ້ວກຸນນະວົງ ຕາງໜ້າ ຊາວສວນ (ຜູ້ປະກອບການຈຳນອນ) 15 ຫົວໜ່ວຍທຸລະກິດ ນຳເອົາເອກະສານທີ່ກ່ຽວກັບ ການເຫັນດີໃຫ້ນຳໃຊ້ສະຖານທີ່ດັ່ງກ່າວ ສົ່ງໃຫ້ ຂະແໜງຂົວທາງ ພະແນກ ຍທຂ ນະຄອນຫຼວງຈັນ ກ່ອນວັນທີ 14 ກໍລະກົດ 2024 ເພື່ອສັງລວມ ແລະ ລາຍງານການຳ ນະຄອນຫຼວງວຽງຈັນ.
3. ມອບໃຫ້ ຂະແໜງຂົວທາງ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເປັນເຈົ້າການໃນການຮ່າງບົດບັນທຶກກອງປະຊຸມ ແລະ ຮ່າງໜັງສືລາຍງານ ການນຳ ນະຄອນຫຼວງວຽງຈັນ ເພື່ອຂໍທິດຊີ້ນຳ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ນະຄອນຫຼວງວຽງຈັນ, ວັນທີ: 13 ສິງຫາ 2024

**ປະທານກອງປະຊຸມ**

ທະວີໄຊ ໄຊປະເສີດ

**ຜູ້ບັນທຶກ**

ອານຸສັກ ລັດຕະນະວົງ